ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ

National Regulatory Authority
for UXO/Mine Action Sector in Lao PDR

# ບົດບັນທຶກກອງປະຊຸມກຸ່ມວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ ໄດ້ຈັດຂື້ນໃນຕອນເຊົ້າ 9:00ໂມງຂອງວັນທີ່ 25/11/09 ທີ່ຫ້ອງປະຊຸມຄຄຊ

**ລາຍຊື່ຜູ້ເຂົ້າຮ່ວມ**

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ນຳເບີໂທລະສັບ | ທີ່ຢູ່ອີແມວ |
|---|---|---|---|---|
| 1. | ທ່ານ ທອງພົນ ແກ້ວໄຊຍະເດດ | ຫົວໜ້າພະແນກປະຕິບັດງານ ຄຄຊ | 5505571 | thongphone@etllao.com |
| 2. | ທ່ານ ໄມ ບອດດິງຕັນ | ທີ່ປຶກສາໜ່ວຍງານຜູ້ເຄາະຮ້າຍ ຄຄຊ | 5610050 | mikebdd@laopdr.com |
| 3. | ທ່ານ ສົມເພັດ ອາຄາວົງ | ສະມາຄົມຄົນພິການລາວ | 5610381 | akhavong@yahoo.com |
| 4. | ທ່ານ ບຸນມະນີ ສີດາວົງ | ກະຊວງແຮງງານ ແລະ ສະຫັວດດີກາ ນສັງຄົມ | 7809001 | Bounmany08@yahoo.com |
| 5. | ທ່ານດຣ ບົວວັນ ສຸດທິວົງ | ພະແນກກົມປິ່ນປົວ | 5330040 | Vanhsouthivong@yahoo.com |
| 6. | ທ່ານ ບຸນຕາວ ຈັນທະວົງສາ | ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ເຄາະ ຮ້າຍ ຄຄຊ | 2207361 | bountao@etllao.com |
| 7. | ທ່ານນາງ ເກີລີ ພິດເຊີ | ອົງການໂຄບ | 7121166 | cope.project.cordinator@gmail.com |
| 8. | ທ່ານ ທອງລິດ ສີຫາລົມດິດ | ສູນຟື້ນຟູແຫ່ງຊາດ | 5526231 | tchtlnrc@laotel.com |
| 9. | ທ່ານນາງ ກະແລັມ ພາເບັນ | ທີ່ປຶກສາໜ່ວຍງານສຶກສາຄວາມສ່ຽງ ຄຄຊ | 7712447 | wausefa@gmail.com |
| 10. | ທ່ານ ວົງ ນັນທະວົງ | ຜູ້ຊ່ວຍສຳຫຼວດໜ່ວຍກວດກູ້ ຄຄຊ | 2636332 | vongnanhthavong@.com |
| 11. | ທ່ານ ວິໄລສັກ ທອງຄຳຫານ | ນາຍພາສາແປ | 2445663 | svilaysack1978@yahoo.com.au |
| 12. | ທ່ານນາງ ປານີ ສຸວັນທະລີສິດ | ກວດກາຂໍ້ມູນຜູ້ເຄາະຮ້າຍ ຄຄຊ | | |
| 13. | ທ່ານນາງ ມະນີຈັນ ແກ້ວລະຄອນ | ຜູ້ຊ່ວຍໜ່ວຍງານຜູ້ເຄາະຮ້າຍ ຄຄຊ | 2822256 | keolakhone@gmail.com |
| 14. | ທ່ານ ໄຊສົມວ່າງ ສຸວັນນະວົງ | ໜ່ວຍງານຖານຂໍ້ມູນ ຄຄຊ | 7714706 | saysomevang@gmail.com |

**ວາລະກອງປະຊຸມ 1: ຕ້ອນຮັບແຂກ ແລະ ການແນະນຳ**

ພິທີເປີດກອງປະຊຸມ ແລະ ຕ້ອນຮັບແຂກທີ່ເຂົ້າຮ່ວມກອງປະຊຸມກຸ່ມວິຊາການ ໂດຍທ່ານ ທອງພົນ ແກ້ວໄຊຍະເດດ ຫົວໜ້າພະແນກປະຕິບັດງານ ຫ້ອງການຄຄຊ.

**ວາລະກອງປະຊຸມ 2 ບົດບັນທຶກກອງປະຊຸມຜ່ານມາ (ມີເອກະສານຕິດຂັດ)**

**ທ່ານ ບຸນຕາວ ຈັນທະວົງສາ:** ລາຍງານກອງຊຸມຜ່ານມາຄັ້ງວັນທີ່ 28/10/09 ໄດ້ແໜ້ນເຖິງແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ຈະບໍ່ແມ່ນແຕ່ໜ່ວຍງານນີ້ເທົ່ານັ້ນຍັງຕ້ອງມີ ໜ່ວຍງານກວດກູ້ ແລະ ໜ່ວຍງານສຶກສາຄວາມສ່ຽງທີ່ເຮັດວຽກຮ່ວມກັນ. ໃນກອງປະຊຸມຍັງໄດ້ເວົ້າເຖິງຄວາມຮັບຜິດຊອບວຽກງານ 6ເສົາຫຼັກ. ໂດຍມີກະຊວງ, ຫົວໜ້າໜ່ວຍງານຕ່າງໆທີ່ມີສ່ວນກ່ຽວຂ້ອງໄດ້ຈັດຕຽມບາງຂໍ້ມູນເຂົ້າໃນວຽກງານດັ່ງກ່າວເຊັ່ນ: ອົງການສຶກສາໂລກ, ກະຊວງສາທາລະນະສຸກ, ສູນຟື້ນຟູແຫ່ງຊາດ, ອົງສາກົນເພື່ອຄົນພິການປະເທດເບັນຢຽມ.

**ວາລະກອງປະຊຸມ 3 ການຕຳນິຕິຊົມຂອງບັນດາແຂກ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້**

**ທ່ານນາງ ບົວວັນ ສຸດທິວົງ:** ຢາກໃຫ້ສິ່ງໜັງສືເຊີນເຂົ້າຮ່ວມກອງປະຊຸມໄວກວ່າເກົ່າ ເພາະວ່າບາງເທື່ອບໍ່ມີພະນັກງານປະຈຳຢູ່ຫ້ອງການ ແລະ ອາດຈະບໍ່ສາມາດມາຮ່ວມກອງປະຊຸມໄດ້.

**ທ່ານ ທອງພັນ ແກ້ວໄຊຍະເດດ:** ທາງຫ້ອງການຄຄຊ ກໍ່ຄືໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ ໄດ້ປະສານງານຮ່ວມກັນກັບທີມງານສຶກສາໂລກໃນການລົງຢັ້ງມຢາມຜູ້ທີ່ຖືກເຄາະຮ້າຍຈາກລະເບີດທີ່ເມືອງ ສັງທອງໃນອາທິດຜ່ານມາ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຢາກຮຽກຮ້ອງມາຍັງທຸກໜ່ວຍງານທີ່ກ່ຽວຂ້ອງເພື່ອຂະຫຍາຍໂຄງການຊ່ວຍເຫຼືອນັ້ນອອກໄປແຂວງອື່ນ. ໃນນັ້ນ, ຄວາມຄືບໜ້າຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍໄດ້ສຳເລັດການຝຶກອົບໂຮມໃຫ້ພະນັກງານຂັ້ນແຂວງ, ເມືອງ ໃນ 13ແຂວງ ແລະ ຈະສືບຕໍ່ໃນ 4ແຂວງພາກເໜືອ.

**ວາລະກອງປະຊຸມ 4 ຕຳແໜ່ງຜູ້ຊ່ວຍວິຊາການຜົກຖືກເຄາະຮ້າຍ**

ທ່ານ ໄມ ບອດດົງຕັນ: ຂ້າພະເຈົ້າມີຄວາມຊາບຊຶ້ງໃຈນຳທາງກະຊວງສາທາ ແລະ ກະຊວງແຮງງານ ແລະ ສະຫັວດດີການສັງຄົມທີ່ໄດ້ປະກອບຮ່າງການລາຍງານໜ້າວຽກເຂົ້າໃນແຜນວຽກປະຈຳປີ. ຂ້າພະເຈົ້າເອງກໍ່ຂໍອາໄພນຳທຸກພາກສ່ວນ ທີ່ຍັງບໍ່ມີການລາຍງານຄວາມຄືບໜ້າຂອງແຜນພັດທະນາຍຸດທະສາດ. ໂດຍສະເພາະ, ແມ່ນພວກເຮົາໄດ້ຂາດຕຳແໜ່ງຫົວໜ້າວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ຕຳແໜ່ງຜູ້ຊ່ວຍຫົວໜ້າວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍ ໃນເວລາອັນດຽວກັນ. ແຕ່ກໍ່ຂໍສະແດງຄວາມຍິນດີນຳສະຫາຍ ບຸນຕາວ ຈັນທະວົງສາ ທີ່ມານຳເຮັດໜ້າທີ່ຕຳແໜ່ງຫົວໜ້າວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍ ແລະ ນາງ ມະນີຈັນ ແກ້ວລະຄອນ ໃນຕຳແໜ່ງຜູ້ຊ່ວຍຫົວໜ້າວິຊາການຊ່ວຍເຫຼືອຜູ້ເຄາະຮ້າຍ.

**ວາລະກອງປະຊຸມ 5 ລາຍງານຄວາມຄືບໜ້າໄລຍະ 2**

**ແມ່ນຈະໄດ້ທົບທວນຄວາມຄືບໜ້າຂອງວຽກທີ່ຜ່ານມາ:** ກໍ່ໄດ້ມີຫຼາຍການລາຍງານໜ້າວຽກເຂົ້າໃນວຽກງານເລື້ອງ ເສັ້ນທາງສູ່ຄວາມປອດໄພ ແລະ ຍຸດທະສາດໜ້າວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ. ເພາະປະຈຸບັນພວກເຮົາແມ່ນກຳລັງເຮັດວຽກໜັກເຂົ້າໃນແຜນການສຳຫຼວດຜູ້ໄດ້ຮັບເຄາະຮ້າຍ ແລະ ກຳລັງກະກຽມໂຄງຮ່າງວຽກປະຈຳປີຂອງໜວ່ຍງານຊ່ວຍຜູ້ເຄາະຮ້າຍ. ເກີນກ່ວານັ້ນ ພວກເຮົາຍັງເຮັດສຳເລັດບົດລາຍງານການສຳຫຼວດໄລຍະ 1(ປະຈຸບັນແມ່ນກຳລັງມີການຈັດພິມເປັນພາສາອັງກິດປະມານ 100ໜ້າ ແລະ ພາສາລາວອາດຈະເກີນກວ່າ 100ໜ້າ ແລະ ອາດຈະພິມແລ້ວໃນຕົ້ນປີໜ້າ).

ສ່ວນສະຫາຍ ບຸນຕາວ ຈັນທະວົງສາ ກໍ່ໄດ້ຂື້ນໄປພົວພັນວຽກໃນ 4ແຂວງພາກເໜືອ ເພື່ອປຶກສາເລື້ອງຈັດການຝຶກອົບໂຮມໃຫ້ບັນດາຜູ້ຮັບຜິດຊອບຂັ້ນແຂວງ, ສາທາເມືອງ ແລະ ພະແນກ ຮສສແຂວງ. ໃນນັ້ນ, ພວກເຮົາກໍ່ກຳລັງເຮັດບົດລາຍງານສຳຫຼວດໄລຍະ 2 ໃນບັນດາ 13ແຂວງ.

**ທ່ານ ບຸນຕາວ ຈັນທະວົງສາ:** ຕາມການລາຍງານການສຳຫຼວດໃນ 13ແຂວງເຫັນວ່າ: ໃນຈຳນວນ 6262ບ້ານ ສຳຫຼວດໄດ້ 1171ບ້ານ, ມີອຸບັດເຫດຈຳນວນ 95ຄົນ, ມີຜູ້ເຄາະຮ້າຍຈຳນວນ 229ຄົນ, ມີຜູ້ເສຍຊີວິດຈຳນວນ 70ຄົນ.

**ທ່ານ ໄມ ບອດດົງຕັນ:** ແຜນຍຸດທະສາດຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈະສືບຕໍ່ໃນວຽກງານເລື້ອງ ສຸຂະພາບຈິດ, ສຸກເສີນທາງການແພດ ແລະ ເກັບກຳຂໍ້ມູນ. ແຕ່ນັ້ນມາ ພວກເຮົາກໍ່ຍັງບໍ່ທັນມີຄວາມຄືບໜ້າບາງຢ່າງຫຼາຍ ເພາະ ສະຫາຍ ບຸນຕາວ ໄດ້ໄປພົວພັນວຽກຢູ່ຕ່າງແຂວງ, ຂ້າພະເຈົ້າເອງກໍ່ໄດ້ລາພັກເປັນເວລາ 2ອາທິດ. ສະນັ້ນ, ການປະຊຸມແຜນຍຸດທະສາດຍັງຈະໄດ້ສືບຕໍ່ໃນ ເດືອນ1 ປີ 2010. ຫັວງຢ່າງຍິ່ງວ່າທຸກທ່ານຄົງຈະເຂົ້າໃຈ ແລະ ອາໄພໃຫ້ພວກຂ້າພະເຈົ້າໃນການຈັດຕຽມວຽກອັນລ່າຊ້ານີ້ດ້ວຍ.

ໃນນັ້ນ: ອົງການສາກົນເພື່ອຄົນພິການປະເທດເບັນຢຽມກໍ່ໄດ້ມີການຈັດຕຽມເລື້ອງລົດໂຮງໝໍ, ສ່ວນອົງການການສຶກສາໂລກກໍ່ໄດ້ຊ່ວຍຜູ້ເຄາະຮ້າຍຈາກລະເບີດທີ່ບໍ່ຕັນແຕກຢູ່ 7ແຂວງ, ສ່ວນທາງກະຊວງສາທາລະນະສຸກ ກໍ່ໄດ້ຈັດຕຽມ <ຖົງຢາປະຈຳບ້ານ> ໃຫ້ທາງສຸກສາລາບ້ານເພື່ອຊ່ວຍເຫຼືອຄົນທີ່ທຸກຍາກ ແຕ່ທາງຫົວໜ້າບ້ານຈະເປັນຜູ້ຢືນຢັ້ງວ່າ ຜູ້ນັ້ນເປັນຄົນທີ່ທຸກຍາກແທ້.

**ວາລະກອງປະຊຸມ 6 ແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍປະຈຳປີ 2010**

**ທ່ານ ໄມ ບອດດິງຕັນ:** ເພື່ອຮັບປະກັນຍຸດທະສາດຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ, ພວກເຮົາຈະສືບຕໍ່ເກັບກຳຂໍ້ມູນໃນໄລຍະ 2 ການສຳຫຼວດນີ້ກໍ່ຈະດຳເນີນໄປຈົນກ່ວາບໍ່ມີອຸບັດເຫດເກີດຂຶ້ນ. ທີ່ຜ່ານມາທາງໜ່ວງານກໍ່ໄດ້ສຳເລັດການຈັດ ການຝຶກອົບໂຮມຢູ່ 13ແຂວງ ແລະ ໃນໄລຍະ2ກໍ່ຈະສືບຕໍ່ໃນ 4ແຂວງພາກເໜືອ. ສ່ວນໃນໄລຍະ2 ແມ່ນຈະເຮັດວຽກຮ່ວມກັນກັບບັນດາແຂວງ, ເມືອງ ແລະ ພະແນກ ຮສສແຂວງ ເພື່ອຕິດຕາມຫາຜູ້ຫຼອດຊີວິດ ໂດຍພາຍໃຕ້ການຊີ້ນຳຂອງ ຫ້ອງການຄຄຊ. ໃນປີ2010ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຈະສ້າງລະບົບຕິດຕາມຜູ້ເຄາະຮ້າຍຈາກອຸບັດເຫດລະເບີດບໍ່ທັນແຕກລວມທັງການຟື້ນຟູ ໂດຍເຮັດວຽກຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ, ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ແລະ ໜ່ວຍງານທີ່ກ່ຽວ ຂ້ອງ.

**<u>ຕົວຢ່າງ:</u> ຫາກມີລະເບີດແຕກຂື້ນ**

- **ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຈະໄດ້ຮັບແຈ້ງການຈາກອຸບັດເຫດວ່າຢູ່** ສະຖານທີ່ໃດ, ວັນໃດ, ຊົ່ວໂມງໃດ, ຜູ້ໃດທີ່ມີສ່ວນຮ່ວມ ແລະ ມີຈັກຄົນ.

- ເມື່ອພວກເຮົາໄດ້ຮັບຂໍ້ມູນແລ້ວ, ທາງໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍຈະສົ່ງ ໜ່ວຍງານເກັບກຳຂໍ້ມູນເພື່ອສືບຫາສາເຫດ ແລະ ເອົາລາຍລະອຽດຕ່າງໆ ພ້ອມທັງຮັບເອົາຜູ້ຫຼອດຊີວິດເຂົ້າຮັບການປິ່ນປົວ.

- ທາງຫ້ອງການຄຄຊ ແມ່ນຍິນດີທີ່ຈະໄດ້ແລກປ່ຽນຂໍ້ມູນຄວາມຄິດເຫັນຕ່າງໆກັບບັນດາທ່ານທັງຫຼາຍ. ເພາະພວກເຮົາຄິດວ່າມັນແມ່ນຈຳເປັນຫຼາຍທີ່ຈະໄດ້ຮັບຮູ້ຂໍ້ມູນຕື່ມອີກນຳທຸກໆທ່ານ.

**<u>ຖ້າຫາກວ່າ:</u>** ຂໍ້ມູນການປິ່ນປົວ ຫຼືວ່າ ການປິ່ນປົວແບບທຳມະຊາດ ຈະຖືກນຳມາບັນທຶກໄວ້ໃນຖານຂໍ້ມູນກ່ຽວກັບການບໍລິການທາງດ້ານສຸຂະພາບຈິດ, ການຟື້ນຟູທາງຮ່າງກາຍ ແລະ ການຝຶກອົບໂຮມວິຊາຊີບໃຫ້ແກ່ຜູ້ຖືກເຄາະຮ້າຍ. ຖ້າບັນຫາເລົ່ານີ້ຫາກຖືກນຳໄປໄວ້ໃນຖານຂໍ້ມູນ,ນັ້ນກໍ່ສະແດງວ່າພວກເຮົາສາມາດເຊື່ອມໂຍງຫາຜູ້ເຄາະຮ້າຍໄດ້.ຖ້າພວກເຮົາຮູ້ວ່າຜູ້ເຄາະຮ້າຍບໍ່ໄດ້ຮັບການບໍລິການ,ທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍກໍ່ຄືທາງຫ້ອງການຄຄຊຈະແຈ້ງໄປຍັງໜ່ວຍງານທີ່ກ່ຽວຂ້ອງເພື່ອຊ່ວຍພວກເຂົາເຈົ້າ ເພາະພວກເຮົາຮູ້ວ່າຂໍ້ດັ່ງກ່າວໄດ້ບັນທຶກໄວ້ໃນຖານຂໍ້ມູນການປິ່ນປົວ ໃນກະຊວງສາທາລະນະສຸກ, ບາງທີທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍກໍ່ອາດຈະເຂົ້າຮ່ວມກອງປະຊຸມກຸ່ມວິຊາການ ທີ່ກະຊວງສາທາລະນະສຸກຈັດຂື້ນໃນຄັ້ງໜ້າ. ທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍແມ່ນມີຄວາມໄຝ່ຝັນທີ່ຈະສ້າງແຜນວຽກໃຫ້ມີຄວາມເຂັ້ມແຂງ ແລະ ສຳເລັດໃນອີກ 2 ຫາ 3ປີຂ້າງໜ້າ. ສະນັ້ນ, ພວກເຮົາຈຳຕ້ອງໄດ້ສຳເລັດລາຍງານການເກັບກຳຂໍ້ມູນນີ້.

ໃນເສົາຫຼັກທີ່2 ພວກເຮົາໄດ້ເວົ້າເຖິງລື້ອງ ສຸນເສີນທາງການແພດ ແລະ ກໍ່ຫຼາຍແຜນການທີ່ຈະເຮັດໃນຕໍ່ໜ້າ, ແຕ່ສິ່ງທີ່ສຳຄັນທີ່ສຸດແມ່ນ ທາງກະຊວງສາທາລະນະສຸກໄດ້ມີການຈັດຕຽມຖົງຢາປະຈຳບ້ານໃຫ້ແກ່ປະຊາຊົນ.

ທາງສະມາຄົມຊ່ວຍເຫຼືອ ແລະ ສົງເຄາະແຫ່ງປະເທດຍີ່ປຸ່ນ ປະຈຳລາວ(ເອເອອາ) ແມ່ນມີແຜນໂຄງການທີ່ຈະຊ່ວຍເຫຼືອລື້ອງ ສຸກເສີນທາງການແພດ ໃນເມືອງແປກ, ແຂວງຊຽງຂວາງ ແລະ ຄາດວ່າຈະປະເລີ້ມຕົບັດໂຄງການໃນປີ 2010.

ຜົນໄດ້ຮັບໃນໄລຍະ1ຜ່ານມາເຫັນວ່າ ອັດຕາການເສຍຊີວິດແມ່ນເພີ້ມຂື້ນຈຳນວນ 60% ແລະ ຫຼອດຊີວິດມີພຽງແຕ່ 40%. ປະຈຸບັນ 30% ແມ່ນເສຍຊີວິດ ແລະ 60% ແມ່ນຫຼອດຊີວິດ.

<u>ຕົວຢ່າງ:</u> ຢູ່ປະເທດກຳປູເຈຍ ອັດຕາການຫຼອດຊີວິດແມ່ນເພີ້ມຂຶ້ນຈຳນວນ 90% ແລະ ເສຍຊີວິດມີພຽງ 10% ນັ້ນເນື່ອງຈາກວ່າ ພວກເຂົາເຈົ້າໄດ້ມີການປັບປຸງວຽກງານການຊ່ວຍເຫຼືອຂອງແພດ, ໝໍຂັ້ນບ້ານ ແລະ ໃຫ້ການບໍລິການລົດໂຮງໝໍ ເພື່ອຊ່ວຍຜູ້ເຄາະຮ້າຍໄດ້ຢ່າງທວງທັນ. ກໍ່ເຊັ່ນດຽວກັບໂຄງການຂອງສະມາຄົມຊ່ວຍເຫຼືອສົງເຄາະແຫ່ງປະເທດຍີ່ປຸ່ນປະຈຳລາວ(ເອເອອາ) ນີ້ແມ່ນ ສຳຄັນຫຼາຍສຳລັບພວກເຮົາ. ສ່ວນອົງການສຶກສາໂລກກໍ່ໄດ້ຈັດຕຽມໜ່ວຍສຸກເສີນແພດ,ໝໍ ແລະ ຈະສືບຕໍ່ຢູ່ໃນ 7ແຂວງ.

ທ່ານ ໄມ ບອດດິງຕັນ: ທາງໂຄງການຊ່ວຍເຫຼືອຂອງເອເອອາ ຍັງຕ້ອງການຄຳປຶກສາຈາກຫ້ອງການຄຄຊ ແລະ ທາງຫ້ອງການຄຄຊຍັງໄດ້ແນະນຳໃຫ້ເອເອອາຕ້ອງໄດ້ເຮັດວຽກຢ່າງໃກ້ສິດຕິດແທດກັບກະຊວງສາທາລະນະສຸກນັ້ນກໍ່ຄື ພະແນກປິ່ນປົວ, ສ່ວນຂໍ້ມູນເພີ່ມແມ່ນໃຫ້ຕິດຕໍ່ພົວພັນນຳທ່ານ ນໍຣິຍາຊຸ ໂອກາຍາມາ.

ທ່ານ ທອງລິດ ສີຫາລົມດິດ: ການສຳຫຼວດຂອງໂຄງການເອເອອາແມ່ນໃກ້ຈະສຳເລັດໃນບໍ່ມື້ນີ້, ສ່ວນໃຫຍ່ກໍ່ແມ່ນເນັ້ນໃສ່ເລື້ອງບໍລິການສຸກເສີນທາງການແພດຂະໜາດນ້ອຍ ຈະດຳເນີນຢູ່ແຕ່ສະເພາະໃນເທດສະບານເມືອງແປກເທົ່ານັ້ນ.

ທ່ານ ໄມ ບອດດີງຕັນ: ການຟື້ນຟູທາງດ້ານຮ່າງກາຍແມ່ນມີຂອບເຂດຈຳກັດ ການໃຫ້ການບໍລິການພາກສ່ວນທີ່ສູນເສຍຕາ ແລະ ຫູແມ່ນບໍ່ລວມກັນ, ສ່ວນຜູ້ທີ່ພິການ(ລ່ອຍ)ທາງແຂນ, ຂາ ກໍ່ແມ່ນຂຶ້ນກັບພາກສ່ວນລໍ້ເລື່ອນ.

ທ່ານດຣ ນາງ ບົວວັນ ສຸດທິວົງ: ສຳລັບພະແນກກິນປິ່ນປົວ ແມ່ນຈະບໍ່ໄດ້ແຍກປະເພດຕາ ແລະ ຫູ.

ທ່ານ ໄມ ບອດດີງຕັນ: ພວກເຮົາຈະຊາບຊຶ້ງໃຈຫຼາຍຖ້າພວກເຮົາໄດ້ຮັບຮູ້ຂໍ້ມູນນີ້ ແລະ ຖ້າເປັນໄປໄດ້ພວກເຮົາກໍ່ຈະຮັບເອົາຂໍ້ມູນດັ່ງເພື່ອໄປຕິດຕໍ່ພົວພັນນຳ ພະແນກຕາ ແລະ ຫູ.

ທ່ານ ບຸນມີ ສິດາວົງ: ສຳລັບຂໍ້ມູນທີ່ພວກເຮົາມີກ່ຽວກັບເລື້ອງການບໍລິການສຸຂະພາບ ໂດຍສະເພາະແມ່ນຄ່າໃຊ້ຈ່າຍໃສ່ຂາທຽມ ກໍ່ເກືອບວ່າຈະບໍ່ໄດ້ເສຍເງິນ, ສ່ວນລາຍລະອຽດຕ່າງໆແມ່ນທາງກິນປິ່ນປົວເປັນຝ່າຍຈັດຫາໃຫ້.

ທ່ານ ສົມເພັດ ອາຄະວົງ: ທາງສະມາຄົມຄົນພິການລາວ ແມ່ນສາມາດສະໜອງສະຖິຕິ ແລະ ສ່ວນເລື້ອງການບໍລິການຈັດຊຸດອົບໂຮມແມ່ນເປັນໄປໄດ້ຍາກເພາະພວກເຮົາບໍ່ມີທຶນພຽງພໍ.

ທ່ານດຣ ນາງ ບົວວັນ ສຸດທິວົງ: ສຸຂະພາບທາງຈິດກໍ່ມີຂອບຈຳກັດຄືກັນ ເພາະມີພະນັກງານພາກັລດພຽງແຕ່ສອງຄົນເທົ່ານັ້ນ ແລະ ທາງອົງການ ຄວາມຕ້ອງການໃນເບື້ອງຕົ້ນ ກໍ່ດຳເນີນໂຄງການໃນສະເພາະຂອງເຂດນະຄອນຫຼວງເທົ່ານັ້ນ ແລະ ຍັງບໍ່ມີແຜນທີ່ຈະຂະຫຍາຍໄປໃນຕ່າງແຂວງເທື່ອ.

ທ່ານ ທອງລິດ ສີຫາລົມດິດ: ທາງອົງການຄວາມຕ້ອງການໃນເບື້ອງຕົ້ນ ແລະ ເຮັດວຽກຮ່ວມກັບຜູ້ທີ່ໄດ້ຮັບການກະທົບຈາກສຸຂະພາບຈິດ. ທາງສຸຂະພາບຈິດຈະມີການປັບປຸງຄ່າໃຊ້ຈ່າຍແນວໃດຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ?

ທ່ານດຣ ນາງ ບົວວັນ ສຸດທິວົງ: ພວກເຮົາບໍ່ທັນມີໜ່ວຍງານຢູ່ໝົດທຸກແຂວງເທື່ອ, ພວກເຮົາມີແຜນທີ່ຈະຂະຫຍາຍການບໍລິການໄປຕ່າງແຂວງ ແຕ່ທຶນແມ່ນມີຈຳກັດ ສ່ວນທຶນດັ່ງກ່າວນີ້ກໍ່ໄດ້ໃຫ້ການຊ່ວຍເຫຼືອມາແຕ່ດົນແລ້ວ.

<u>**ໝາຍເຫດ:**</u> ແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍປະຈຳປີ2010 ຄາດວ່າຈະສຳເລັດໃນບໍ່ມື້ນີ້, ຫຼັງຈາກນັ້ນຈະສົ່ງໄປຫາທຸກໜ່ວຍງານ ແລະ ທຸກກະຊວງທີ່ກ່ຽວຂ້ອງທາງອີເມວ.

### ວາລະກອງປະຊຸມ 7 ແຜນສ້າງການຍຸດທະສາດ

**ທ່ານ ບຸນຕາວ ຈັນທະວົງສາ**: ສະຫຼຸບແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍປະຈຳປີ 2010 ແລະ ທຸກໜ່ວຍງານແມ່ນຈຳເປັນທີ່ຈະຕ້ອງໄດ້ປະກອບການລາຍງານແຜນວຽກໃຫ້ສອດຄ່ອງກັບແຜນວຽກທີ່ຈະເຮັດ ທີ່ທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍກໍ່ຄືທາງຫ້ອງການ ຄຄຊ ໄດ້ວາງໄວ້.

**ທ່ານ ທອງລິດ ສີຫາລົມດິດ:** ສຳລັບອົງການມູນນິທິເພື່ອຄົນພິການແຫ່ງຊາດ ແມ່ນກຳລັງຊອກຫານະໂຍບາຍຕໍ່ຄົນພິການ. ໃນສ່ວນຂອງອົງການ... CBR ຍັງມີການຮັບປະກັນຊ່ວຍເຫຼືອໃນບາງບ້ານ. ສ່ວນໃນແຜນວຽກປີ 2010 ແມ່ນຈຳເປັນທີ່ຈະຕ້ອງໄດ້ສະແຈ້ງໃຫ້ຮູ້ເຖິງທຶນທີ່ຈະໄປຊ່ວຍເຫຼືອໃນສະຖານທີ່ນັ້ນ.

**ທ່ານ ທອງພິນ ແກ້ວໄຊຍະເດດ:** ແຜນນະໂຍບາຍຕ່າງໆແມ່ນໄດ້ເຮັດໄວ້ແລ້ວ ແຕ່ພວກເຮົາຍັງບໍ່ມີທຶນເທື່ອ. ສະນັ້ນ, ພວກເຮົາແມ່ນກຳລັງຊອກຫາແຫຼ່ງທຶນຢູ່. ສ່ວນໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍອາດຈະເຂົ້າໃຈໃນເລື້ອງນັ້ນ ແລະ ກໍ່ຮູ້ດີໃນຈຳນວນທຶນທີ່ເໝາະສົມ. ດັ່ງນັ້ນ, ທຸກໜ່ວຍງານທີ່ກ່ຽວຂ້ອງແມ່ນຈຳເປັນທີ່ຈະຕ້ອງໄດ້ກະກຽມໃສ່ໃນແຜນວຽກທີ່ຈະເຮັດ ໂດຍສະເພາະແມ່ນທາງ ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫັວດດີການສັງຄົມ(ຈະຕ້ອງແຈ້ງຈຳນວນຕົວເລກຈິງທີ່ຈະຂໍ)ແລ້ວໃຫ້ຮີບສົ່ງມາຫາພວກເຮົາ.

**ທ່ານ ທອງລິດ ສີຫາລົມດິດ:** ຖ້າວ່າເປັນໄປໄດ້ກໍ່ຢາກໃຫ້ເລີ້ມເຮັດໂຄງການນ້ອຍກ່ອນ ແລະ ກໍ່ໃຫ້ທ່ານດຣ ນາງ ບົວວັນເປັນຜູ້ຄິດໄລ່ຈຳນວນຕົວເລກທີ່ຖືກຕ້ອງເພື່ຈະໄດ້ຂໍທຶນ.

**ທ່ານ ໄມ ບອດດີຕົນ:** ພວກເຮົາຈຳເປັນຫຼາຍທີ່ຕ້ອງໄດ້ໝັ້ນແຜນທີ່ຈະເຮັດ ເພື່ອຈະໄດ້ກະກຽມຂໍງົບປະມານຈາກຜູ້ທີ່ຈະຊ່ວຍເຫຼືອ, ການເຫັນດີພ້ອມໃນເອກະສານຕ່າງໆຂອງທາງສຸຂະພາບຈິດແມ່ນເປັນສິ່ງທີ່ຈຳເປັນຫຼາຍ.

**ທ່ານ ທອງລິດ ສີຫາລົມດີດ:** ສ່ວນມາດຖານຜູ້ທີ່ຈະເຂົ້າໄປຝຶກອົບໂຮມທີ່ສູນຝຶກອົບໂຮມ ສີເກີດແມ່ນຕ້ອງມີອາຍຸ 40ປີລົງມາ. ສ່ວນໃນປີ 2010 ຫາ 2014 ຈະຕ້ອງໄດ້ມີການກະກຽມ ການຝຶກອົບໂຮມໃຫ້ແກ່ຄົນພິການ ແຕ່ຈະຕ້ອງໄດ້ມີການເລືອກເອົາວິຊາທີ່ເໝາະສົມໃຫ້ເຂົາເຈົ້າ.

ສ່ວນສຳລັບ ສະມາຄົມຄົນພິການລາວ ກໍ່ໄດ້ມີການຝຶກອົບໂຮມໃຫ້ແກ່ຄົນພິການໃນດ້ານການແກະສະລັກ ແລະ ກໍ່ໄດ້ສົ່ງຂາຍຕາມຫ້ອງຕະຫຼາດບ້ານເຮົາ. ສຳລັບໂຄງການນີ້ແມ່ນໄດ້ຮັບຜົນດີພໍສົມຄວນໂດຍສະເພາະແມ່ນຢູ່ແຂວງຊຽງຂວາງ ສ່ວນໃນຄົນພິການທາງສາຍຕາເຂົາເຈົ້າກໍ່ໄດ້ມີການຝຶກອົບໂຮມໃນເລື້ອງການນວດແຜນໂບຮານ.

**ທ່ານ ໄມ ບອດດີຕົນ:** ການທີ່ຈະຈັດການຝຶກອົບໂຮມສຳລັບຜູ້ທີ່ໄດ້ຟື້ນຟູທາງດ້ານຮ່າງກາຍກໍ່ອາດເປັນສິ່ງຫຸ້ຍຍາກພໍສົມຄວນ, ແຕ່ທຸກຢ່າງກໍ່ອາດຈະບໍ່ສຳເລັດໄດ້ໃນປີ 2010. ແຕ່ບາງວຽກກໍ່ອາດຈະສືບຕໍ່ໃນປີຕໍ່ໆໄປ. ໃນຈຳພວກກຸ່ມວິຊາຊີບຂອງອົງການສາກົນເພື່ອຄົນພິການປະເທດເບັນຢຽມ ໂດຍທົ່ວໄປກໍ່ແມ່ນກຸ່ມວິຊາຊີບທີ່ມາຈາກຜູ້ທີ່ຖືກເຄາະຮ້າຍຈາກລະເບີດທີ່ບໍ່ທັນແຕກ ແລະກໍ່ຍັງມີນກຸ່ມວິຊາຊີບທີ່ມາຈາກ ສະມາຄົມຄົນພິການລາວ ໃນນັ້ນກໍ່ໄດ້ເວົ້າເຖິງ "ສິດທິຂອງຄົນພິການ" ສຳລັບສິດທິຂອງຄົນພິການທີ່ໄດ້ຮັບສາເຫດມາຈາກລະເບີດ. ໃນນັ້ນ, ກໍ່ແມ່ນມອບໃຫ້ທາງ ສະມາຄົມຄົນພິການລາວ ເປັນຜູ້ປຶກສາຫາລືນຳບັນດາຄະນະລັດຖະມຸນຕີໃນເລື້ອງນະໂຍບາຍຂອງເຂົາເຈົ້າ ແລະ ຄວນຈະເຮັດວຽກຮ່ວມກັບບັນດາ 7ກະຊວງອັນຂ້າງໃນເລື້ອງ ສິດທິຂອງຄົນພິການ.

**ທ່ານ ທອງພົນ ແກ້ວໄຊຍະເດດ:** ການຮ່ວມມືຂອງພວກເຮົາແມ່ນຈະສຳເລັດ. ໃນນັ້ນທາງກະຊວງແຮງງານ ແລະ ສະຫັວດດີການສັງຄົມ ແມ່ນໃຫ້ຮີບດ່ວນເຮັດແຜນວຽກເຂົ້າໃນປີ 2010. ມາໃນທີ່ນີ້ແມ່ນຂອບໃຈນຳທຸກໆທ່ານທີ່ໄດ້ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້.

ວາລະກອງປະຊຸມ 8 **ແຈ້ງວັນ,ເດືອນ,ປີ ຂອງການປະຊຸມໃນຄັ້ງໜ້າ**

ສຳລັບ ກອງປະຊຸມກຸ່ມວິຊາການໃນຄັ້ງໜ້າແມ່ນຈະຈັດຂື້ນໃນວັນທີ່ 27/01/2010

ວາລະກອງປະຊຸມ 9 **ເວລາປິດກອງປະຊຸມແມ່ນ** 12:00

**ຮຽບຮຽງໂດຍ:** **ຈັດຕຽມໂດຍ:**

**ຫົວໜ້າພະແນກປະຕິບັດງານ** **ມະນີຈັນ ແກ້ວລະຄອນ**